# Gender and Labour in the Global South

## Article – Laotian

This translation is for a better understanding of the English texts. We are very happy if you join the discussions. Please note that all contributions in the comment section and in the discussion steps need to be in English.

**Intersectionality: A tool for social justice**

ອຳນາດທັບຊ້ອນ: ເຄື່ອງມືເພື່ອຄວາມຍຸດຕິທຳທາງສັງຄົມ

**Short description:**
ອ່ານວິທີ ທີ່ Yamila Pita ອະທິບາຍແນວຄວາມຄິດຂອງອຳນາດທັບຊ້ອນ ແລະ ຄວາມກ່ຽວຂ້ອງຂອງມັນໃນຂົງເຂດນະໂຍບາຍສາທາລະນະ.

**Content:**

ຕາມປະຫວັດສາດ, ທິດສະດີສະຕີນິຍົມ ພະຍາຍາມເນັ້ນຍໍ້າການປະສານອຳນາດການພົວພັນ ແລະ ການທັບຊ້ອນກັນຂອງບັນດາຮູບແບບການປະຕິບັດທີ່ແຕກຕ່າງກັນຂອງການຈຳແນກ. ໃນປີ 1989 ເຖິງແມ່ນວ່າ ນັກວິຊາການທາງດ້ານກົດໝາຍ ສັນຊາດອາຟຣິກກາ-ອາເມລິກາ Kimberlé Crenshaw ໄດ້ປະກາດແນວຄວາມຄິດຂອງ ອຳນາດທັບຊ້ອນ ໃນເລື່ອງກໍລະນີທາງກົດໝາຍສະເພາະອັນໜຶ່ງ. ຈຸດປະສົງແມ່ນເພື່ອສ່ອງແສງກ່ຽວກັບບັນດາມິຕິຂອງການກົດຂີ່ຂົ່ມເຫັງທີ່ແມ່ຍິງຜິວດຳປະສົບພົບພໍ້ໃນບໍລິສັດທີ່ມີຊື່ສຽງແຫ່ງໜຶ່ງຂອງສະຫະລັດອາເມລິກາ (Viveros Vigoya, 2016)[1]. ໂດຍຜ່ານແນວຄວາມຄິດນີ້ Crenshaw ມີເຈດຈຳນົງເພື່ອເນັ້ນໜັກໃຫ້ເຫັນວ່າ ແມ່ຍິງຜິວດຳ ຕ້ອງປະເຊີນໜ້າກັບຄວາມຮຸນແຮງ ແລະ ການຈຳແນກປະຕິບັດຫຼາກຫຼາຍຮູບແບບອີງໃສ່ທັງເຊື້ອຊາດ ແລະ ເພດ. ໃນຂະນະດຽວກັນ, ຄຳວ່າ ອຳນາດທັບຊ້ອນ ຄົງຈະຊ່ວຍໃນການຕໍ່ຕ້ານແນວໂນ້ມທີ່ຈະປະຕິບັດຕໍ່ເຊື້ອຊາດ ແລະ ເພດ ເປັນໝວດໝູ່ຂອງປະສົບການ ແລະ ການວິເຄາະທີ່ແຍກຈາກກັນ ແລະ ບໍ່ກ່ຽວຂ້ອງກັນ (Crenshaw, 1989).

ດ້ວຍວິທີນີ້, ອຳນາດທັບຊ້ອນເປັນທັດສະນະທາງການວິເຄາະທີ່ເຜີຍໃຫ້ເຫັນບັນດາວິທີທີ່ຄວາມບໍ່ສະເໝີພາບເທົ່າທຽມກັນຫຼາກຫຼາຍຮູບແບບທັບຊ້ອນກັນ ຫຼື ຕັດກັນ. ກ່າວອີກແບບໜຶ່ງກໍຄື ພວກເຮົາສາມາດເວົ້າໄດ້ວ່າ ອຳນາດທັບຊ້ອນ ເປັນແກ້ວຂະຫຍາຍສຳລັບການທຳຄວາມເຂົ້າໃຈໃນຄວາມເປັນຈິງ, ເປັນແນວຄວາມຄິດສຳລັບການຄິດພິຈາລະນາວ່າ ເກນການຈຳແນກຕ່າງໆມີປະຕິສຳພັນກັນແນວໃດ.

Crenshaw ອະທິບາຍຄຳສັບໄວ້ດັ່ງນີ້: "ໂດຍພື້ນຖານແລ້ວມັນເປັນແກ້ວຂະຫຍາຍ, ເປັນ prism ເພື່ອການເບິ່ງເຫັນ ວິທີການຄວາມບໍ່ສະເໝີພາບໃນຮູບແບບຕ່າງໆ ທີ່ມັກຈະດຳເນີນໄປພ້ອມກັນ ແລະ ທັບຖົມກັນແລະກັນໃຫ້ຮຸນແຮງຂຶ້ນ.

[1] Viveros Vigoya, Mara (2016). La interseccionalidad: una aproximación situada a la dominación. *Debate Feminista*. Vol. 52, pp. 1-17.

University of Basel

ເຮົາມັກເວົ້າເຖິງຄວາມບໍ່ສະເໝີພາບທາງດ້ານເຊື້ອຊາດແຍກອອກຈາກຄວາມບໍ່ສະເໝີພາບທີ່ອີງໃສ່ບົດບາດທາງເພດ, ຊົນຊັ້ນ, ເພດສະພາບ ຫຼື ສະຖານະການເຂົ້າເມືອງ. ສິ່ງມັກຈະຂາດຫາຍໄປກໍ່ຄືວິທີການທີ່ຄົນບາງຄົນຈໍາຕ້ອງປະເຊີນກັບສິ່ງເຫຼົ່ານີ້ທັງໝົດ ແລະ ປະສົບການນັ້ນບໍ່ພຽງແຕ່ເປັນຜົນລວມຂອງສ່ວນຕ່າງໆເທົ່ານັ້ນ”[2]




ນັກສະແດງຫຼາຍຄົນຈາກຫຼາກຫຼາຍສາຂາວິຊາໄດ້ນໍາໃຊ້ແນວຄວາມຄິດ ອໍານາດທັບຊ້ອນ ຕໍ່ສູ້ກັບຄວາມບໍ່ສະເໝີພາບ ແລະ ສົ່ງເສີມຄວາມຍຸດຕິທໍາທາງສັງຄົມ (Hankivsky; Jordan-Zachery, 2019). ດ້ວຍຄວາມຄິດນີ້, ພວກເຮົາຕ້ອງຖາມຕົວເອງກ່ຽວກັບບົດບາດຂອງ ອໍານາດທັບຊ້ອນ ໃນການກໍານົດ ແລະ ປະຕິບັດນະໂຍບາຍສາທາລະນະ. ຖ້ານັ້ນຈະກາຍເປັນເຄື່ອງມືທີ່ມີທ່າແຮງໃນການຮວມເຂົ້າກັນ ແລະ ການປ່ຽນແປງທາງສັງຄົມ ມີສອງບັນຫາທີ່ຕ້ອງການຄວາມໃສ່ໃຈເປັນພິເສດ; ບັນຫາທີໜຶ່ງ, ມີຄວາມຈໍາເປັນທີ່ຈະຕ້ອງກ້າວໄປໄກກວ່າວິທີຄິດແບບເສັ້ນຊື່ດ່ຽວ. ບັນຫາທີສອງ, ມີຄວາມຈໍາເປັນທີ່ຕ້ອງກໍາຈັດອະຄະຕິ, ທັດສະນະແບບເໝົາລວມ, ການແບ່ງແຍກ ແລະ ຜົນກະທົບທີ່ກົດຂີ່ຢູ່ໃນການແຊກແຊງນະໂຍບາຍແບບດັ້ງເດີມ (Hankivsky; Jordan-Zachery, 2019). ເຄື່ອງມືນະໂຍບາຍສາທາລະນະຈໍາເປັນຕ້ອງຮັບຮູ້ຄວາມຊັບຊ້ອນຂອງໂຄງສ້າງທາງສັງຄົມ ແລະ ການເຊື່ອມໂຍງກັນຂອງຫຼາກຫຼາຍໝວດໝູ່ (ຊົນຊັ້ນ, ເຊື້ອຊາດ, ຊົນເຜົ່າ, ວັນນະ, ເພດ, ເພດສະພາບ, ຕໍາແໜ່ງທີ່ຕັ້ງພູມສັນຖານ, ສະຖານະພາບການຍ້າຍຖິ່ນ, ສາສະໜາ, ຄວາມພິການ) ທີ່ຝັງຢູ່ໃນໂຄງສ້າງດ້ານອໍານາດ ແລະ ການພົວພັນຕ່າງໆທີ່ມີຢູ່ໃນປັດຈຸບັນ.

ໃນຂະນະທີ່ມີຄວາມທ້າທາຍ ແລະ ອຸປະສັກຫຼາຍຢ່າງ[3] ໃນການນໍາໃຊ້ ແລະ ບັງຄັບໃຊ້ທັດສະນະອໍານາດທັບຊ້ອນໃນຂະບວນການຂອງນະໂຍບາຍສາທາລະນະນັ້ນ ກໍຍັງມີບັນດາຜົນປະໂຫຍດຕໍ່ກັບວິທີການດັ່ງກ່າວເຊັ່ນກັນ. ດັ່ງທີ່ Hankivsky and Jordan-Zachery (2019) ໂຕ້ແຍ້ງ ທັດສະນະອໍານາດທັບຊ້ອນ (ວ່າເປັນມູມມອງທີ່ຈະເຂົ້າໃຈຄວາມເປັນຈິງ) ຊຸກຍູ້ວິທີການໃໝ່ຂອງການເບິ່ງໃນທຸກໆດ້ານ ແລະ ຂັ້ນຕອນຂອງວົງຈອນນະໂຍບາຍສາທາລະນະ. ທັງມີສັກກະຍະພາບໃນການສ້າງອົງຄວາມຮູ້ໃໝ່ໆ ທີ່ເໝາະສົມກວ່າ ທີ່ຈະສະທ້ອນ ແລະ ຕອບສະໜອງຕໍ່ກັບປະສົບການ ແລະ ບັນຫາຕ່າງໆຂອງປະຊາຊົນ. ໂດຍການຮັບຮູ້ ແລະ

[2] Steinmetz, Katy (February 20, 2020). She Coined the Term “Intersectionality” Over 30 Years Ago. Here’s What It Means to Her Today. *Time*. https://time.com/5786710/kimberle-crenshaw-intersectionality/

[3] For more on this topic, see for example: Manuel, Tiffany (2006). Envisioning the Possibilities for a Good Life: Exploring the Public Policy Implications of Intersectionality Theory. *Journal of Women, Politics and Policy*. Vol. 28, No. 3/4, pp. 173-203.

University of Basel

ເຂົ້າໃຈຕຳແໜ່ງທາງສັງຄົມຂອງປະຊາຊົນເທົ່ານັ້ນ ທີ່ນະໂຍບາຍສາທາລະນະຈະສາມາດນຳໄປສູ່ການເປັນຢູ່ທີ່ດີຂອງສັງຄົມ ແລະ ໂດຍສະເພາະແມ່ນກຸ່ມຄົນດ້ອຍໂອກາດໄດ້ (Manuel, 2006). ນອກນີ້, ເມື່ອຄຳນຶງເຖິງຂອບຄວາມຍຸດຕິທຳທາງສັງຄົມແລ້ວ ກໍຈຳເປັນຕ້ອງກ້າວຂ້າມບັນດາຄວາມບໍ່ສະເໝີພາບທີ່ລະບຸໄດ້ງ່າຍດາຍ ແລະ ວິເຄາະ ຈຸດທັບຊ້ອນ ຂອງບັນດາຂໍ້ເສຍຕ່າງໆ (Hankivsky; Jordan-Zachery, 2019). ສິ່ງເຫຼົ່ານີ້ມັກຈະຖືກລະເລີຍ ເຮັດໃຫ້ຜູ້ທີ່ຢູ່ຊາຍຂອບດັ່ງກ່າວ ມີຄວາມສ່ຽງຫຼາຍຂຶ້ນ.

ທ່ານຄິດວ່າ ວິທີການ ອຳນາດທັບຊ້ອນ ເໝາະສົມທີ່ຈະແກ້ໄຂບັນຫາຄວາມບໍ່ສະເໝີພາບ ທີ່ຫຼາກຫຼາຍນີ້ບໍ? ທ່ານຮູ້ຈັກຕົວຢ່າງຂອງນະໂຍບາຍສາທາລະນະທີ່ອອກແບບມາຈາກ ທັດສະນະອຳນາດທັບຊ້ອນ ບໍ? ພວກເຮົາຂໍເຊີນທ່ານມີຄຳຖາມ ແລະ ໃຫ້ຄຳເຫັນນຳພວກເຮົາດ້ວຍ.

**ດາວໂຫຼດ**:

Crenshaw, Kimberlé W. (1989). Demarginalizing the Intersection of Race and Sex: A Black Feminist Critique of Antidiscrimination Doctrine, Feminist Theory and Antiracist Politics. University of Chicago Legal Forum: Vol. 1989: Iss. 1, Article 8. Available at: http://chicagounbound.uchicago.edu/uclf/vol1989/iss1/8

Hankivsky, Olena; Jordan-Zachary, Julia S. (2019). Introduction: Bringing Intersectionality to Public Policy. In: Hankivsky, O. and Jordan-Zachary, J.S. (eds) *The Palgrave Handbook of Intersectionality in Public Policy*. London: Palgrave Macmillan.